ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການກະຊວງ
ໂຄງການເສີມສ້າງທັກສະທີ່ເປັນບຸລິມະສິດ ສຳລັບການເຕີບໂຕຂອງ ສປປ ລາວ ເລກທີ: 3642-ຮ /ຫກ
ສັນຍາເລກທີ: C2.2-G12.6 ນະຄອນຫຼວງວຽງຈັນ, ວັນທີ: 23/10/26

ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກົມການຈັດຫາງານ, ໂຄງການເສີມສ້າງທັກສະທີ່ເປັນບຸລິມະສິດ ສຳລັບການເຕີບໂຕຂອງ ສປປ ລາວ ໄດ້ຮັບອະນຸມັດງົບປະມານປະຈຳສົກປີ 2026 ເພື່ອດຳເນີນການ ປະມູນຈັດຊື້ ອຸປະກອນກະສິກຳ ດ້ວຍການປະມູນແບບສົມທຽບລາຄາ.
2. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກົມການຈັດຫາງານ, ໂຄງການເສີມສ້າງທັກສະທີ່ເປັນບຸລິມະສິດ ສຳລັບການເຕີບໂຕຂອງ ສປປ ລາວ ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາສຳລັບການຈັດຊື້ ອຸປະກອນກະສິກຳ ໄລຍະເວລາໃນການສົ່ງມອບ ຫລື ການບໍລິການ ແມ່ນ 45 ວັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ **10:30 ໂມງ ວັນທີ 17 ພະຈິກ 2026 ທີ່ຫ້ອງປະຊຸມ ກົມການຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຊັ້ນ 03), ບ້ານໂພນສະຫວ່າງ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ. ໂທລະສັບ 020 56644188, 020 29773848. Email:** psgproject.proc@gmail.com, phetchinda2016@hotmail.com. sing_shl27@hotmail.com, ແລະ ຊອງປະມູນສົມທຽບລາຄາທຸກໆ ຊອງຈະໄດ້ເປີດໃນເວລາ **10:30 ໂມງ ວັນທີ 17 ພະຈິກ 2026** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

ຫົວໜ້າຫ້ອງການ
(ຫົວໜ້າໂຄງການ)

ບຸນຍອດ ຈັນທະວອນ